ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 1067 /ຫອຄ.ກຫຄວ

ນະຄອນຫຼວງວຽງຈັນ, ລົງວັນທີ 19 ພຶດສະພາ 2017

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫລວງ

- ຫ້ອງການອຸດສາຫະກຳ ແລະການຄ້າ ເມືອງ, ເທດສະບານ
- ປະຊາຊົນບັນດາເຜົ່າ ແລະຜູ້ລົງທຶນ (ພາຍໃນ ແລະຕ່າງປະເທດ) ທີ່ມີຈຸດປະສົງຢາກສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ

ເລື່ອງ: ການຍົກເລີກ "ໃບສະເໜີຈອງຊື່ວິສາຫະກິດ" ແລະ"ໃບຮັບຮອງຊື່ວິສາຫະກິດ" ອອກຈາກຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ການນຳໃຊ້ແບບຟອມ "ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ" ໃໝ່

ເພື່ອຈັດຕັ້ງປະຕິບັດບົດບັນຍັດ ຂໍ້ 4 ມາດຕາ 20 (ປັບປຸງ) ຂອງກົດໝາຍວ່າດ້ວຍວິສາຫະກິດ - 2013 ກ່ຽວກັບ "ການຂຶ້ນທະບຽນຊື່ວິສາຫະກິດ" ໃຫ້ສອດຄ່ອງ, ຕັດຂອດທີ່ບໍ່ຈຳເປັນ ອອກຈາກຂັ້ນຕອນການແຈ້ງຂຶ້ນທະບຽນວິສາຫະກິດ ແນໃສ່ສ້າງຄວາມສະດວກແລະງ່າຍ ແກ່ການເລີ່ມຕົ້ນທຸລະກິດຂອງປະຊາຊົນບັນດາເຜົ່າ, ຜູ້ລົງທຶນ (ພາຍໃນ ແລະຕ່າງປະເທດ), ເຮັດໃຫ້ປະຊາກອນທຸລະກິດເພີ່ມຂຶ້ນ ເປັນພື້ນຖານແກ່ການພັດທະນາເສດຖະກິດຂອງຊາດ.

ຫ້ອງການ ກະຊວງອຸດສາຫະກຳ ແລະການຄ້າ, ແຈ້ງມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະຈັດຕັ້ງປະຕິບັດຢ່າງເຂັ້ມງວດ ດັ່ງນີ້:

1. ໃຫ້ຍົກເລີກການນຳໃຊ້ແບບຟອມ "ໃບສະເໜີຈອງຊື່ວິສາຫະກິດ" ແລະ "ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ" ຊຶ່ງເປັນສ່ວນໜຶ່ງ ໃນຊຸດແບບຟອມຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ ສຳລັບທຸກຮູບການ ແລະຮູບແບບວິສາຫະກິດ (ເວັ້ນເສັຍແຕ່ຮູບການວິສາຫະກິດສ່ວນບຸກຄົນ) ຕາມທີ່ໄດ້ບົ່ງໄວ້ໃນແຈ້ງການ, ເລກທີ 1620/ອຄ.ທຄວ, ລົງວັນທີ 28 ສິງຫາ 2013 ແລະ ໃຫ້ນຳໃຊ້ແບບຟອມ "ໃບຄຳຮ້ອງແຈ້ງຂຶ້ນທະບຽນວິສາຫະກິດ" ໃໝ່ແທນ (ແບບຟອມລະອຽດ ຄັດຕິດມາພ້ອມນີ້);



Scanned by CamScanner

2. ໃຫ້ຍົກເລີກການອອກ "ໃບຮັບຮອງຊື່ວິສາຫະກິດ" ທັງໝົດ ທັງໃນເວລາແຈ້ງຂຶ້ນ ຫລື ໃນເວລາປ່ຽນແປງເນື້ອໃນທະບຽນວິສາຫະກິດ;

3. ໃຫ້ຍົກເລີກການອອກ "ໃບອະນຸມັດຊື່ວິສາຫະກິດ" ແລະ ໃຫ້ເຮັດສະໂນດນຳສົ່ງຊື່ວິສາຫະກິດ ແທນ ໃບສະໂນດນຳສົ່ງດັ່ງກ່າວ ມີຄວາມໝາຍເຊັ່ນດຽວກັນກັບໃບສະໂນດນຳສົ່ງທາງລັດຖະການທົ່ວໄປ ບໍ່ແມ່ນຂັ້ນຂອດໃນລະບົບການແຈ້ງຂຶ້ນທະບຽນວິສາຫະກິດ ແລະ ບໍ່ໃຫ້ມອບໃຫ້ວິສາຫະກິດທີ່ກ່ຽວຂ້ອງ.

4. ພາຍຫລັງ ໄດ້ຮັບສະໂນດນຳສົ່ງຊື່ວິສາຫະກິດ ຈາກກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແລ້ວ ຫ້າມບໍ່ໃຫ້ພະແນກ ຫລື ຫ້ອງການອຸດສາຫະກຳ ແລະການຄ້າ ຂັ້ນທ້ອງຖິ່ນ ອອກ "ໃບຮັບຮອງຊື່ວິສາຫະກິດ" ຫລື ເອກະສານທີ່ມີລັກສະນະຂ້າງຄຽງໃດໆ ຕ່າງຫາກອີກ. ໃນກໍລະນີ ລະເມີດຜູ້ລະເມີດຈະຕ້ອງຮັບຜິດຊອບ ຕໍ່ການກະທຳຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 210 ຂອງກົດໝາຍວ່າດ້ວຍວິສາຫະກິດ - 2013 ທຸກປະການ;

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ

ນ.ບານສະຕິ ເທບພະວົງ

ບ່ອນສົ່ງ:

- ກະຊວງກ່ຽວຂ້ອງ;
- ຄະນະນຳກະຊວງ, ບັນດາກົມ, ຫ້ອງການ ແລະສະຖາບັນ;
- ສະພາການຄ້າ ແລະ ອຸດສາຫະກຳ;
- ບັນດາພະແນກ ອຄ ຂັ້ນແຂວງ ແລະ ຫ້ອງການ ອຄ ຂັ້ນເມືອງ;
- IFC/MPDF



Scanned by CamScanner